# ການຊ່ວຍເຫຼືອທີ່ທ່ານຕ້ອງການໃນເວລາທີ່ທ່ານຕ້ອງການມັນຫຼາຍທີ່ສຸດ.

ບໍ່ວ່າທ່ານຈະຫັນມາຫາພວກເຮົາດ້ວຍເຫດຜົນໃດກໍຕາມ, ພວກເຮົາມີໂຄງການ ຫຼື ຊັບພະຍາກອນເພື່ອຊ່ວຍທ່ານໃຫ້ບັນລຸເປົ້າໝາຍຂອງທ່ານ. ພວກເຮົາຈະຊ່ວຍທ່ານໃຫ້ໄປຮອດຈຸດນັ້ນ.

## ການຫວ່າງງານ

- ໃຫ້ລາຍໄດ້ຊົ່ວຄາວເມື່ອທ່ານສູນເສຍວຽກ ຫຼື ມີຊົ່ວໂມງເຮັດວຽກທີ່ຫຼຸດລົງ ໂດຍບໍ່ແມ່ນຄວາມຜິດຂອງທ່ານເອງ.
- ທ່ານສາມາດຮັບແຕ່ $40 ຫາ $450 ໃນແຕ່ລະອາທິດ ໂດຍຂຶ້ນກັບລາຍໄດ້ຂອງທ່ານໃນໄລຍະ 18 ເດືອນທີ່ຜ່ານມາ.

**edd.ca.gov/Unemployment**

## ຄວາມພິການ

- ໃຫ້ລາຍໄດ້ຊົ່ວຄາວໃນເວລາທີ່ທ່ານບໍ່ສາມາດເຮັດວຽກໄດ້ ເນື່ອງຈາກການເຈັບເປັນ ຫຼື ການບາດເຈັບທີ່ບໍ່ກ່ຽວກັບວຽກ, ການຖືພາ ຫຼື ການເກີດລູກ.
- ທ່ານສາມາດຮັບ 70 ຫາ 90 ເປີເຊັນຂອງຄ່າຈ້າງປະຈຳອາທິດຂອງທ່ານ ທີ່ໄດ້ຮັບໃນ 5 ຫາ 18 ເດືອນກ່ອນວັນທີເລີ່ມຮຽກຮັບສິດຂອງທ່ານ.

**edd.ca.gov/Disability**

## ການລາພັກເພື່ອວຽກຄອບຄົວແບບໄດ້ຮັບຄ່າຈ້າງ (Paid Family Leave)

- ຈ່າຍເງິນອຸດໜູນສູງສຸດເຖິງແປດອາທິດໃຫ້ແກ່ຜູ້ທີ່ຕ້ອງການລາພັກຈາກວຽກເພື່ອ:
  - ເບິ່ງແຍງຄົນໃນຄອບຄົວທີ່ເຈັບເປັນຮ້າຍແຮງ.
  - ລ້ຽງລູກເກີດໃໝ່.
  - ເຂົ້າຮ່ວມໃນກິດຈະກຳທີ່ມີຄຸນສົມບັດ ເນື່ອງຈາກມີສະມາຊິກຄອບຄົວຕ້ອງເຂົ້າປະຈຳການທະຫານ.
- ທ່ານສາມາດຮັບ 70 ຫາ 90 ເປີເຊັນຂອງຄ່າຈ້າງປະຈຳອາທິດຂອງທ່ານ ທີ່ໄດ້ຮັບໃນ 5 ຫາ 18 ເດືອນກ່ອນວັນທີເລີ່ມຮຽກຮັບສິດຂອງທ່ານ.

**edd.ca.gov/PaidFamilyLeave**

## ການບໍລິການຈັດຫາງານ

- ເນື່ອງຈາກການເປັນສ່ວນໜຶ່ງຂອງລະບົບພັດທະນາກຳລັງແຮງງານຂອງລັດ, ພະແນກພັດທະນາການຈັດຫາງານ (Employment Development Department, EDD) ແມ່ນຢູ່ບ່ອນນີ້ເພື່ອຊ່ວຍຜູ້ຊອກຫາວຽກໃນການຫາອາຊີບທີ່ມີຄວາມໝາຍ.
  - ຊອກຫາການສຶກສາ ແລະ ການຝຶກອົບຮົມກ່ຽວກັບວຽກ.
  - ການຊອກວຽກ, ການຝຶກອົບຮົມກ່ຽວກັບວຽກ, ການຊ່ວຍຂຽນປະຫວັດຫຍໍ້ ແລະ ອື່ນໆອີກ.
  - ການນຳໃຊ້ຫ້ອງຂໍ້ມູນໃນທ້ອງຖິ່ນທີ່ມີອິນເຕີເນັດ, ໂທລະສັບ ແລະ ອື່ນໆ.
- ຮັບການແນະນຳເພື່ອຮັບການບໍລິການຊ່ວຍເຫຼືອ ລວມທັງການລ້ຽງເດັກ, ລະບົບສາທາລະນຸປະໂພກ, ທີ່ຢູ່ອາໄສ ແລະ ການເດີນທາງ.

**edd.ca.gov/StrongerCA**

ສຶກສາເພີ່ມເຕີມກ່ຽວກັບທາງເລືອກການຈ່າຍເງິນອຸດໜູນໄດ້ທີ່ **edd.ca.gov/PaymentOptions.**